**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

*********

# ພາລະບົດບາດ

# ໜ່ວຍງານວິຊາການ ຄວບຄຸມ ແລະ ລຶບລ້າງ ພະຍາດໄຂ້ຍຸງ

ໂດຍ

ຄະນະກຳມະການ ປະສານງານ ກອງທຶນໂລກ

2015

## I. ປະຫວັດຄວາມເປັນມາ:

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ມີບົດຮຽນອັນໃຫ່ຍຫຼວງ ກ່ຽວກັບການເຈັບເປັນ ແລະ ການເສຍຊີວິດ ຍ້ອນພະຍາດໄຂ້ຍຸງ ໃນລະຫວ່າງປີ 2000-2010. ໃນເວລານັ້ນ, ປະເທດລາວ ໄດ້ປະຕິບັດຕາມແນວທາງເພື່ອບັນລຸຄາດໝາຍທີ່ໄດ້ກໍານົດໄວ້ສໍາລັບປີ 2015 ຂອງເປົ້າຫມາຍພັດທະນາສະຫະສະວັດ. ເຖິງຢ່າງໃດກໍ່ຕາມ, ນັບແຕ່ທ້າຍປີ 2011 ໄດ້ມີການລະບາດຄືນ ຂອງພະຍາດໄຂ້ຍຸງ ໂດຍສະເພາະໃນ 5 ແຂວງພາກໃຕ້. ນອກຈາກນັ້ນໃນເດືອນທັນວາປີ 2013, ຜົນຂອງການຕິດຕາມກວດກາຕາມປົກກະຕິຢູ່ແຂວງຈໍາປາສັກ ກ່ຽວກັບປະສິດທິພາບຂອງຢາໃນການປິ່ນປົວໄດ້ໃຫ້ຮູ້ວ່າ 22.2% ຂອງຄົນເຈັບທີ່ປິ່ນປົວດ້ວຍຢາ artemether-lumefantrine ຍັງຄົງມີເຊື້ອແມ່ກາຝາກໃນເລືອດໃນມື້ທີ່ 3 ຂອງການປິ່ນປົວ. ການດື້ຕໍ່ຢາ Artemisinin ແມ່ນຖືກຢັ້ງຢືນ ໂດຍຫຼັກຖານຂອງການກາຍພັນຂອງ K13 ໃນການໄຫຼວຽນຂອງຕົວແມ່ກາຝາກ.

ການຄວບຄຸມພະຍາດໄຂ້ຍຸງໃນ ສປປ ລາວ ແລະ ກິດຈະກໍາການລົບລ້າງແມ່ນຢູ່ໃນຈຸດໜ້າເປັນຫ່ວງ. ບັນຫາທີ່ເກີດຂຶ້ນເຫຼົ່ານີ້ ໄດ້ຮຽກຮ້ອງໃຫ້ມີການດໍາເນີນງານ ທີ່ເຈາະຈົງຈາກພາກສ່ວນທີ່ກ່ຽວຂ້ອງທາງດ້ານວິຊາການໃນການເຮັດວຽກຮ່ວມກັນເພື່ອແກ້ໄຂສິ່ງທ້າທາຍເຫຼົ່ານີ້.

ຄະນະກໍາມະການ ປະສານງານ ແຫ່ງຊາດ ແມ່ນໄດ້ຮັບການສະໜັບສະໜູນຈາກກອງທຶນໂລກ ເພື່ອຕ້ານກັບ 3 ພະຍາດ (ໄຂ້ຍຸງ, ວັນນະໂລກ, ເຮັດໄອວີ/ເອດ) ຊຸກຍູ້ໃຫ້ລັດຖະບານ ສືບຕໍ່ຄວາມພະຍາຍາມ. ໜຶ່ງໃນຄວາມຮຽກຮ້ອງຕ້ອງການ ແມ່ນໃຫ້ມີການຈັດຕັ້ງໜ່ວຍງານ ທາງດ້ານວິຊາການ ເພື່ອຕິດຕາມກວດກາໂຄງການ ໂດຍມີຜູ້ຕາງໜ້າຈາກຫລາຍພາກສ່ວນ ທີ່ມີອິດທິພົນໃນການມີສ່ວນ ຮ່ວມທີ່ສໍາຄັນ ຕໍ່ການໃຫ້ການສະໜັບສະໜູນທາງດ້ານວິຊາການ ດ້ວຍການ ໃຫ້ຄໍາແນະນໍາໃນການ ຈັດຕັ້ງປະຕິບັດໂຄງການ ເພື່ອຄວບຄຸມ ແລະ ລົບລ້າງພະຍາດໄຂ້ຍຸງໃນ ສປປ ລາວ ໃຫ້ມີປະສິດທິຜົນ.

## II. ຈຸດປະສົງ:

ຈຸດປະສົງຂອງໜ່ວຍງານວິຊາການ ຄວບຄຸມ ແລະ ລົບລ້າງພະຍາດ ໄຂ້ຍຸງ ເຊິ່ງມີຕົວຫຍໍ້ແມ່ນ TFM, ແມ່ນເພື່ອເພີ່ມການປະສານງານ ໃນຄວາມພະຍາຍາມ ແລະ ຮັບປະກັນ ລະບົບທີ່ສອດຄ່ອງ ໃນການວາງແຜນ ແລະການປະຕິບັດ ເພື່ອພະຍາຍາມຄວບຄຸມ ແລະ ລົບລ້າງພະຍາດໄຂ້ຍຸງ ໃນທົ່ວປະເທດເຊິ່ງໄດ້ລະບຸຢູ່ໃນແຜນງານຂອງລັດຖະບານ. ໂດຍສະເພາະ, ຈຸດປະສົງຂອງໜ່ວຍງານວິຊາການ ຄວບຄຸມ ແລະ ລົບລ້າງພະຍາດໄຂ້ຍຸງແມ່ນແນໃສ່ສ້າງຄວາມເຂັ້ມແຂງ ໃຫ້ການຄຸ້ມຄອງບໍລິຫານ ຂອງໂຄງການຄວບຄຸມພະຍາດໄຂ້ຍຸງເພື່ອເສີມຂະຫຍາຍການເຊື່ອມໂຍງ, ປະສານງານກັບຄູ່ຮ່ວມງານ ແລະ ກະຈາຍອໍານາດໃນການຄຸ້ມຄອງບໍລິຫານ ລົງສູ່ທ້ອງຖິ່ນ

## III. ພາລະກິດ:

1. ສົ່ງເສີມການເຊື່ອມໂຍງ/ການຮ່ວມມືຂອງຫຼາຍຂະແໜງການໃນການຄວບຄຸມ ແລະ ລົບລ້າງ ພະຍາດໄຂ້ຍຸງ;
2. ເສີມຂະຫຍາຍການຮ່ວມມືພາຍໃນປະເທດ, ຕ່າງປະເທດ ແລະ ການພົວພັນກັບສາກົນ;
3. ສົ່ງເສີມການສົນທະນາກ່ຽວກັບນະໂຍບາຍ ແລະ ອໍານວຍຄວາມສະດວກໃນການກໍານົດທົ່ວໄປໃນບ່ອນທີ່ເຫັນວ່າມີຄວາມເໝາະສົມ.

## IV. ຍຸດທະສາດ:

1. ສ້າງຄວາມເຂັ້ມແຂງ ແລະ ເພີ້ມການຮ່ວມມືໃນລະດັບຊາດ ໃນການຄວບຄຸມ ແລະ ລົບລ້າງພະຍາດໄຂ້ຍຸງເພື່ອຮັບປະກັນວ່າບັນຫາ ແລະ ຊ່ອງຫ່ວາງຕ່າງໆທີ່ສໍາຄັນ ໄດ້ຖືກບັນຈຸເຂົ້າໃນແຜນວຽກງານລະດັບຊາດ.

2. ສົ່ງເສີມວຽກງານຂໍການສະໜັບສະໜູນ ແລະ ເສີມຂະຫຍາຍຄວາມຮັບຮູ້ໃນລະດັບຊາດ ກ່ຽວກັບສະພາບການ ຂອງພະຍາດໄຂ້ຍຸງ ພ້ອມທັງບັນຫາຕ່າງໆທີ່ພົວພັນ;
3. ປັບປຸງ ການເຂົ້າເຖິງຂໍ້ມູນຂ່າວສານກ່ຽວກັບ ພະຍາດໄຂ້ຍຸງ;
4. ສ້າງຄວາມເຂັ້ມແຂງດ້ານຄວາມສາມາດ ໃນລະດັບຊາດ ໃນການແກ້ໄຂບັນຫາທີ່ກ່ຽວຂ້ອງກັບການຄວບຄຸມ ແລະ ລຶບລ້າງ ພະຍາດໄຂ້ຍຸງ ແລະ ຜົນສະທ້ອນຕໍ່ສຸຂະພາບ ຈາກການເຊື່ອມໂຍງຂອງເສດຖະກິດຢູ່ໃນພາກພື້ນ, ໂລກາວິວັດ, ການຄ້າເສລີ, ເຕັກໂນໂລຊີ ແລະ ນະວັດຕະກໍາທີ່ທັນສະໄໝ.

## V. ຂອບເຂດຂອງການເຮັດວຽກ:

ເພື່ອໃຫ້ສອດຄ່ອງກັບຈຸດປະສົງ ແລະ ຍຸດທະສາດ ທີ່ກ່າວມາຂ້າງເທິງນັ້ນ, ການເຮັດວຽກ ຂອງໜ່ວຍງານວິຊາການ ຄວບຄຸມ ແລະ ລຶບລ້າງ ພະຍາດໄຂ້ຍຸງ ຈະຕ້ອງປະຕິບັດຕາມພາລະບົດບາດຂ້າງລຸ່ມນີ້:

1. ເພື່ອເປັນການຊຸກຍູ້ການພັດທະນາ ຂອງບົດສະເໜີຂໍທຶນ ຕາມການສະໜອງທຶນຮູບແບບໃໝ່ ແລະ ບົດສະເໜີ ເພື່ອຮັບປະກັນທຶນສໍາລັບໂຄງການ ຄວບຄຸມ ແລະ ລຶບລ້າງ ພະຍາດໄຂ້ຍຸງ ແຫ່ງຊາດ;
2. ເພື່ອສ້າງ ແລະ ປັບປຸງແຜນປະຕິບັດງານປະຈໍາປີ ລວມທັງວັດຖຸປະສົງ ແລະ ເຫດການທີ່ສໍາຄັນ;
3. ເພື່ອກໍານົດມາດຕະຖານ ຄູ່ມືແນະນໍາທາງດ້ານວິຊາການ ເພື່ອສະໜັບສະໜູນ ໃນການຈັດຕັ້ງ ປະຕິບັດກິດຈະກໍາ ການຄວບຄຸມພະຍາດໄຂ້ຍຸງ;
4. ປະສານສົມທົບກິດຈະກໍາ ໃນການຄວບຄຸມພະຍາດໄຂ້ຍຸງ ລວມທັງບັນດາກິດຈະກໍາທີ່ດໍາເນີນການໂດຍອົງການຈັດຕັ້ງ ຂອງລັດຖະບານ, ອົງການຈັດຕັ້ງສາກົນ ແລະ ຊຸມຊົນ;
5. ເພື່ອປະກອບສ່ວນການພັດທະນາ ຂອງລະບົບການເບິ່ງແຍງຮັກສາສຸຂະພາບ ທັງພາກລັດ ແລະເອກະຊົນ ທີ່ສຸມໃສ່ກິດຈະກໍາຄວບຄຸມພະຍາດໄຂ້ຍຸງ;
6. ເພື່ອໃຫ້ບັນລຸເປົ້າໝາຍຂອງການຄວບຄຸມ ແລະ ລຶບລ້າງ ພະຍາດໄຂ້ຍຸງ ຕາມຄາດໝາຍທີ່ໄດ້ວາງໄວ້ໃນແຜນການພັດທະນາ ດ້ານສາທາລະນະສຸກ;
7. ເພື່ອຕິດຕາມກວດກາ ແລະ ປະເມີນຜົນ ແຜນນະໂຍບາຍແຫ່ງຊາດ, ຍຸດທະສາດ, ແຜນຄູ່ມືໃນການແນະນໍາ, ບົດໂຄງຮ່າງ ແລະ ແຜນໂຄງການພະຍາດໄຂ້ຍຸງ;
8. ປະສານສົມທົບ ກັບບັນດາຄູ່ຮ່ວມງານ ແລະ ນໍາໄປສູ່ການລະດົມທຶນ ແລະ ຂໍການສະໜັບ ສະໜູນ ໂດຍຜ່ານຊ່ອງທາງຕ່າງໆ;
9. ເພື່ອສະໜັບສະໜູນ, ພັດທະນາ ແລະ/ຫຼື ໃຫ້ຄໍາຄິດເຫັນ ແລະ ຕໍານິສິ່ງຂ່າວ ກ່ຽວກັບເອກະ ສານ ທີ່ຈະສະເໜີຕໍ່ ຄະນະກໍາມະການກວດກາ/ຄະນະກໍາມະການ ປະສານງານ ກອງທຶນໂລກ ກ່ຽວກັບຜົນງານ ການຄວບຄຸມ ແລະ ລຶບລ້າງພະຍາດໄຂ້ຍຸງ.

## VI. ຂະບວນການ / ກົນໄກ

1. ສະມາຊິກຖາວອນຂອງ ໜ່ວຍງານວິຊາການ ຄວບຄຸມ ແລະ ລຶບລ້າງ ພະຍາດໄຂ້ຍຸງ ແມ່ນຜູ້ຕາງໜ້າ ທີ່ໄດ້ຖືກຄັດເລືອກຈາກກົມກອງ ແລະ ສະຖາບັນ ຂອງກະຊວງສາທາລະນະສຸກເຊັ່ນ: ກົມຄວບຄຸມພະຍາດຕິດຕໍ່, ກົມປິ່ນປົວ, ກົມອາຫານ ແລະ ຢາ, ກົມອະນາໄມ-ສົ່ງເສີມສຸຂະພາບ, ກົມແຜນການ ແລະ ຮ່ວມມືສາກົນ, ກົມກວດກາ, ສູນໄຂ້ຍຸງ, ສູນວິເຄາະ-ລະບາດວິທະຍາ, ສູນແມ່ ແລະ ເດັກ, ສູນຂ່າວສານການແພດ, ແລະຫ້ອງການຜູ້ຮັບທຶນຫຼັກຂອງກອງທຶນໂລກ. ອົງການສະຫະປະຊາຊາດ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ອົງການຈັດຕັ້ງ ທາງສັງຄົມ ຈະໄດ້ຮັບການເຊື້ອເຊີນໃຫ້ເຂົ້າມາຮ່ວມໃນກອງປະຊຸມສາມັນ ໃນກໍລະນີທີ່ເຫັນວ່າມີຄວາມຈໍາເປັນ ເຊັ່ນ: UNAIDS, UNICEF, UNODC, WHO, Burnet, IOM, LaoPHA, NCA, PEDA, PSI, LRC, ເຄືອຄ່າຍ PLHIV. ກະຊວງຕ່າງໆ ແລະ ຜູ້ປະສານງານ ຂອງຄະນະກໍາມະການແຫ່ງຊາດ ຄວບຄຸມ ແລະ ລຶບລ້າງ ພະຍາດໄຂ້ຍຸງ ກໍ່ຈະຖືກເຊີນເຂົ້າຮ່ວມ

ຖ້າເຫັນວ່າຈຳເປັນ. ຖ້າເຫັນວ່າມີຄວາມຈຳເປັນ ໜ່ວຍງານວິຊາການ ຄວບຄຸມ ແລະ ລຶບລ້າງ ພະຍາດໄຂ້ຍຸງ ສາມາດພິຈາລະນາວ່າ ອົງການຈັດຕັ້ງໃດສາມາດເຂົ້າຮ່ວມປະຊຸມ ຢ່າງເປັນ ປົກະຕິນຳໄດ້.

2. ໜ່ວຍງານວິຊາການ ຄວບຄຸມ ແລະ ລຶບລ້າງ ພະຍາດໄຂ້ຍຸງ ຄວນຈະປະຊຸມປະຈຳໄຕມາດ. ແລະ ສາມາດ ຈັດຕັ້ງກອງປະຊຸມວິສາມັນ ແລະ ຮຽກປະຊຸມດ່ວນໄດ້ ຫາກເຫັນວ່າມີຄວາມຈຳເປັນ.
3. ຫົວໜ້າສູນໄຂ້ຍຸງ, ກະຊວງສາທາລະນະສຸກ ຄວນຈະເປັນ ປະທານຂອງ ໜ່ວຍງານວິຊາການຄວບຄຸມ ແລະ ລຶບລ້າງ ພະຍາດໄຂ້ຍຸງ ແລະ ຮັບຜິດຊອບໃນການຈັດປະຊຸມ ແລະ ລາຍງານ ໃຫ້ກົມຄວບຄຸມພະຍາດຕິດຕໍ່, ກະຊວງສາທາລະນະສຸກ.
4. ສູນໄຂ້ຍຸງ, ກະຊວງສາທາລະນະສຸກ ຄວນຈະເປັນ ກອງເລຂາຂອງ ໜ່ວຍງານວິຊາການ ຄວບຄຸມ ແລະ ລຶບ ລ້າງ ພະຍາດໄຂ້ຍຸງ ຈະເປັນຜູ້ສົ່ງບັດເຊີນ, ກະກຽມເອກະສານຂອງກອງ ປະຊຸມ, ລາຍການຂອງກອງປະຊຸມ, ບັນທຶກກອງປະຊຸມ ແລະ ກະກຽມບົດລາຍງານ ຜົນຂອງ ກອງ ປະຊຸມ ແລະ ຮັບຜິດຊອບທາງດ້ານການ ບໍລິຫານຕ່າງໆສຳລັບໜ່ວຍງານ.

*********

# ຕົວອັກສອນຫຍໍ້

| | |
|---|---|
| Burnet | ສະຖາບັນເບີເນັດ |
| CCM | ຄະນະກຳມະການ ປະສານງານ ກອງທຶນໂລກ |
| CHAS | ສູນຕ້ານເອດ ແລະ ພະຍາດຕິດຕໍ່ທາງເພດສຳພັນ |
| CLE | ສູນວິເຄາະ ແລະ ລະບາດວິທະຍາ |
| GFATM | ກອງທຶນໂລກ ຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ |
| IOM | ອົງການສາກົນຄຸ້ມຄອງຄົນຕ່າງດ້າວ |
| Lao PHA | ສະມາຄົມ ຜູ້ຕິດເຊື້ອ ໃນລາວ |
| LRC | ອົງການກາແດງລາວ |
| LYU | ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ |
| MCH Centre | ສູນແມ່ ແລະ ເດັກ |
| NCA | ທຶນຊ່ວຍເຫຼືອ ຂອງຄຣິດຕະຈັກນໍເວ |
| NCCA | ຄະນະກຳມະການແຫ່ງຊາດຕ້ານເອດ |
| NGOs | ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ |
| NSAP | ແຜນຍຸດທະສາດ ແລະ ແຜນງານແຫ່ງຊາດ |
| OC | ຄະນະກຳມະການກວດກາ |
| PEDA | ສະມາຄົມສົ່ງເສີມ ພັດທະນາການສຶກສາ |
| PLHIV | ຜູ້ທີ່ຕິດເຊື້ອເອດ |
| PSI | ອົງການສາກົນເພື່ອການບໍລິການປະຊາຊົນ |
| TFM | ໜ່ວຍງານວິຊາການ ຄວບຄຸມ ແລະ ລົບລ້າງໄຂ້ຍຸງ |
| TWG | ຄະນະກຳມະການດ້ານວິຊາການ |
| UN | ອົງການສະຫະປະຊາຊາດ |
| UNAIDS | ໂຄງການຕ້ານເອດຂອງອົງການສະຫະປະຊາຊາດ |
| UNICEF | ກອງທຶນຊ່ວຍເຫລືອເດັກຂອງອົງການສະຫະປະຊາຊາດ |
| UNODC | ຫ້ອງການອົງການສະຫະປະຊາຊາດຕ້ານຢາເສບຕິ ແລະ ອາສະຍາກຳ |
| WHO | ອົງການອະນາໄມໂລກ |